# ຮ່ວມກັນສ້າງຄວາມປອດໄພ ແລະ ຄວາມເຂັ້ມແຂງຄືນສູ່ຊຸມຊົນ

## ຄວນເຮັດແນວໃດ ?

### ກ່ອນເກີດໄພພິບັດ



ຕິດຕາມການພະຍາກອນ ແລະ ການແຈ້ງເຕືອນ ທາງວິທະຍຸ ແລະ ໂທລະພາບ



ສ້ອມແປງເຮືອ ເພື່ອຍົກຍ້າຍໄປບ່ອນປອດໄພ



ສ້ອມແປງເຮືອນໃຫ້ແຂງແຮງ



ປູກຕົ້ນໄມ້ໃຫ້ຫຼາຍ ເພື່ອປ້ອງກັນໄພພິບັດ ແລະ ສິ່ງແວດລ້ອມ

- ປົກປັກຮັກສາສະພາບແວດລ້ອມ ເພື່ອປ້ອງກັນການເກີດໄພພິບັດດ້ວຍການເອົາໃຈໃສ່ປູກຕົ້ນໄມ້ໃຫ້ຫຼາຍຢູ່ເຂດເນີນສູງ ແລະ ເຂດອ່າງໂຕ່ງຂອງແມ່ນໍ້າລໍາເຊ.
- ມີສະຕິຫ້າງຫາກະກຽມຕໍ່ໄພພິບັດ ດ້ວຍການເອົາໃຈໃສ່ຍ່າງໃກ້ຊິດໃນການຕິດຕາມຂ່າວສະພາບດິນຟ້າອາກາດທາງວິທະຍຸ ແລະ ໂທລະພາບ.
- ສ້ອມແປງເຮືອນໃຫ້ເຂັ້ມແຂງທົນທານຕໍ່ໄພພິບັດ ແລະ ເອົາໃຈໃສ່ສ້ອມແປງເຮືອ ເພື່ອກຽມການຍົກຍ້າຍໄປຫາບ່ອນທີ່ປອດໄພ.
- ກະກຽມອາຫານ, ນໍ້າດື່ມ ແລະ ຈັດມ້ຽນຊັບສິ່ງຂອງໄວ້ບ່ອນປອດໄພກ່ອນໄພພິບັດຈະເກີດຂຶ້ນ.

### ໄລຍະເກີດໄພພິບັດ



ຄວນເກັບຮັກສານໍ້າສະອາດ ແລະ ດື່ມນໍ້າຕົ້ມທີ່ສຸກດີ



ບໍ່ປ່ອຍປະໃຫ້ເດັກລິງຫຼິ້ນນໍ້າ



ໃຫ້ການປະຖົມພະຍາບານແກ່ຜູ້ປະສົບເຄາະຮ້າຍ



ຍົກຍ້າຍຄົນ, ຊັບສິນ ແລະ ສັດລ້ຽງໄປບ່ອນປອດໄພ

- ຕັກເຕືອນລູກຫຼານບໍ່ໃຫ້ລິງຫຼິ້ນນໍ້າ ເພື່ອຫຼີກເວັ້ນຈາກການຈົມນໍ້າ ແລະ ງູພິດແນງໄມ້ກັດຕອດ.
- ຮີບຮ້ອນຍົກຍ້າຍຄົນ, ສັດ ແລະ ຊັບສິ່ງຂອງໄປຢູ່ບ່ອນທີ່ສູງ ແລະ ປອດໄພ.
- ເອົາໃຈໃສ່ກິນອາຫານທີ່ສະອາດສຸກດີ, ເກັບຮັກສານໍ້າໃສ່ໂອ່ງ, ໄຫທີ່ມີຝາອັດແຈບ ແລະ ດື່ມນໍ້າຕົ້ມຟົດສຸກດີ ເພື່ອຫຼີກເວັ້ນຈາກພະຍາດລະບາດ.
- ເອົາໃຈໃສ່ຕິດຕາມຄໍາປະກາດແຈ້ງການ ແລະ ຂ່າວດິນຟ້າອາກາດທາງໂທລະໂຄ່ງ, ວິທະຍຸ ແລະ ໂທລະພາບ.

### ຫຼັງຈາກເກີດໄພພິບັດ



ຄວນທໍາຄວາມສະອາດບໍລິເວນບ້ານເຮືອນ



ສ້ອມແປງຄອງເໝືອງ ແລະ ຖະໜົນຫົນທາງພາຍໃນບ້ານຫຼັງນໍ້າຖ້ວມ



ອາສາສະໝັກກາແດງລົງຕິດຕາມ ແລະ ໂຄສະນາ ປ້ອງກັນພະຍາດລະບາດ



ປະເມີນຜົນເສຍຫາຍຈາກໄພພິບັດ

- ເອົາໃຈໃສ່ສ້ອມແປງເຮືອນ ແລະ ທໍາຄວາມສະອາດບໍລິເວນເດີ່ນບ້ານ.
- ສ້ອມແປງເສັ້ນທາງເຂົ້າບ້ານ, ລະບົບຄອງເໝືອງ ແລະ ອານາໄມແຫຼ່ງນໍ້າດື່ມ, ນໍ້າໃຊ້.
- ຕິດຕາມ ແລະ ລາຍງານສະພາບການເກີດພະຍາດໃຫ້ເຈົ້າໜ້າທີ່ ແລະ ອາສາສະໝັກບ້ານ.
- ເອົາໃຈໃສ່ລົງຕິດຕາມ ແລະ ປະເມີນຜົນເສຍຫາຍຈາກໄພພິບັດ ແລະ ເຮັດການຟື້ນຟູຄືນໃໝ່.

ຈັດພິມໂດຍ: ກອງອຸປະຕິໄພ ແລະ ບັນເທົາທຸກ, ອົງການກາແດງລາວ. ໂທ/ແຟັກ: (021)250000 / 241228; Email: laodphq@laotel.com
ສະໜັບສະໜູນໂດຍ: ສະພາກາແດງຍີ່ປຸ່ນ ແລະ ສະຫະພັນກາແດງ / ກາຊີກວົງເດືອນແດງສາກົນ.

Japanese Red Cross

Lao Red Cross

IFRC